# ອົງປະກອບທີ 2

## ການຄຸ້ມຄອງ ແລະ ນຳໃຊ້ທີ່ດິນໃນລະດັບທ້ອງຖິ່ນ

ໂຄງການຈະສຸມໃສ່ສາມເມືອງຄື: ເລົ່າງາມ, ຕະໂອ້ຍ ແລະ ສະໝ້ວຍ ຂອງແຂວງສາລະວັນ ເພື່ອທົດລອງ ຈັດຕັ້ງປະຕິບັດ, ພັດທະນາ ແລະ ບັນທຶກລາຍງານທຸກຮູບແບບວິທີການຊ່ວຍເຫຼືອ ປະຊາຊົນທ້ອງຖິ່ນ, ສະມາຄົມ ແລະ ຊຸມຊົນຕ່າງໆ ທາງດ້ານກົດໝາຍຊຸມຊົນ ໃນການຄຸ້ມຄອງປົກປັກຮັກສາທີ່ດິນ ແລະ ຊັບພະຍາກອນທຳມະຊາດໂດຍການມີສ່ວນຮ່ວມ, ທ່ຽງທຳ, ໂປ່ງໃສ ແລະ ມີຄວາມຍືນຍົງຫຼາຍຂື້ນ. ນອກຈາກນີ້ ຍັງຈະເປັນຂົວຕໍ່ໃຫ້ແກ່ຂັ້ນທ້ອງຖິ່ນຊຸມຊົນ ແລະ ຂັ້ນທ້ອງຖິ່ນຊຸມຊົນສູ່ຂັ້ນສູນກາງ ເພື່ອໃຫ້ເຂົ້າໃຈຢ່າງເລິກເຊິ່ງ ເຖິງສະພາບຄວາມເປັນຈິງໃນວຽກງານ ການພັດທະນາທີ່ດິນ ແລະ ຊັບພະຍາກອນໃນ ສປປ ລາວ.



**ຄູ່ຮ່ວມງານຈັດຕັ້ງປະຕິບັດໂຄງການ**

ລວມມີກະຊວງກະສິກຳ ແລະ ປ່າໄມ້, ກະຊວງຍຸຕິທຳ, ສະພາທະນາຍຄວາມ, ອົງການຈັດຕັ້ງສາກົນອື່ນໆ, ມະຫາວິທະຍາໄລແຫ່ງຊາດ, ສູນກາງສະຫະພັນແມ່ຍິງລາວ, ກະຊວງຖະແຫຼງຂ່າວ ແລະ ວັດທະນະທຳ, ສະມາຄົມບໍ່ຫວັງຜົນກຳໄລ, ກຸ່ມເຄືອຂ່າຍທີ່ເຮັດວຽກກ່ຽວກັບທີ່ດິນ ແລະ ບໍລິສັດພາກສ່ວນເອກະຊົນຕ່າງໆ.

# ອົງປະກອບທີ 3

## ການພັດທະນາຄວາມອາດສາມາດ

ເປົ້າໝາຍຂອງການເສີມສ້າງຄວາມອາດສາມາດໄດ້ເນັ້ນໃສ່ກຸ່ມຄົນ ແລະ ອົງການຈັດຕັ້ງ ເພື່ອທີ່ຈະເຮັດໃຫ້ພາກສ່ວນເຫຼົ່ານີ້ຈັດການ ແລະ ແກ້ໄຂຂໍ້ຂັດແຍ່ງກ່ຽວກັບທີ່ດິນ ແລະ ຊັບພະຍາກອນທຳມະຊາດໄດ້ດີຂື້ນ ລວມທັງອົງການຈັດຕັ້ງສາກົນ, ພະນັກງານລັດ, ພະນັກງານທ້ອງຖິ່ນ, ນັກກົດໝາຍ ແລະ ນັກສຶກສາໃຫ້ຮູ້ກ່ຽວກັບສິດທີ່ຖືກຕ້ອງຕາມກົດໝາຍ ແລະ ກົນໄກການແກ້ໄຂຂໍ້ຂັດແຍ່ງ.




**ຕ້ອງການຂໍ້ມູນເພີ່ມເຕີມຕິດຕໍ່ໄດ້ທີ່:**

ນາງ ຄຳຫຼ້າ ບຸດທະລາດ ຫົວໜ້າໂຄງການ

E-mail: khamla@rightslinklao.org

ໂທ: 021-312 519, ແຟັກ: 021-315 841

ມືຖື: 020-2242 6203


www.rightslinklao.org

# ໂຄງການ

## ເຄືອຂ່າຍຂໍ້ມູນທີ່ດິນ ແລະ ຊັບພະຍາກອນທຳມະຊາດ



**Rights-LINK Lao Project**

**ຈັດຕັ້ງປະຕິບັດໂຄງການໂດຍ:**

ອົງການບ້ານຈຸດສຸມສາກົນ (VFI) ແລະ
ອົງການຄຸ້ມຄອງທີ່ດິນແຫ່ງຊາດ (NLMA)

ສະໜັບສະໜູນທຶນໂດຍ:

ອົງການເຊັດສ໌ດີຊີ (SDC)

## ຄວາມເປັນມາ

ອົງການບ້ານຈຸດສຸມສາກົນໄດ້ຈັດຕັ້ງປະຕິບັດໂຄງການທີ່ກ່ຽວພັນກັບປະເດັນທີ່ດິນມາຕັ້ງແຕ່ ປີ 2001 ໂດຍເລີ່ມຈາກການວາງແຜນການນຳໃຊ້ທີ່ດິນແບບພື້ນຖານຮ່ວມກັບປະຊາຊົນ ໃນບ້ານເປົ້າໝາຍຂອງໂຄງການທີ່ແຂວງສາລະວັນ. ພາຍຫຼັງທີ່ໄດ້ມີຂໍ້ຂັດແຍ່ງທາງດ້ານທີ່ດິນ ລະຫວ່າງປະຊາຊົນທ້ອງຖິ່ນ ແລະ ນັກລົງທຶນຂຶ້ນຫຼາຍຄັ້ງ ອົງການຈຶ່ງພະຍາຍາມອອກແບບວິທີການທີ່ຈະເຊື່ອມຕໍ່ກ່ຽວກັບບັນຫາທີ່ໄດ້ເກີດຂຶ້ນຢູ່ໃນຂັ້ນພື້ນຖານ ໃຫ້ໄປເຖິງລະດັບຜູ້ຮັບຜິດຊອບການວາງນະໂຍບາຍ. ອົງການໄດ້ກ້າວໄປສູ່ເວທີນະໂຍບາຍລະດັບຊາດເຊັ່ນ: ໄດ້ພັດທະນາປຶ້ມຄູ່ມືສິດ ແລະ ໜ້າທີ່ຂອງບ້ານໃນການຄຸ້ມຄອງທີ່ດິນ ແລະ ຊັບພະຍາກອນປ່າໄມ້ຮ່ວມກັບກົມປ່າໄມ້. ຈາກນັ້ນ ອົງການໄດ້ຮ່ວມກັບອົງການຄຸ້ມຄອງທີ່ດິນແຫ່ງຊາດ ຈັດຝຶກອົບຮົມຫົວຂໍ້: "ການແກ້ໄຂຂໍ້ຂັດແຍ່ງ" ພ້ອມທັງໄດ້ພັດທະນາຊຸດອຸປະກອນການຝຶກອົບຮົມດັ່ງກ່າວ. ອົງການໄດ້ຈັດກອງປະຊຸມລະດັບຊາດຮ່ວມກັບສະຖາບັນຄົ້ນຄ້ວາກະສິກຳ ແລະ ປ່າໄມ້ແຫ່ງຊາດ, ກອງສົ່ງເສີມກະສິກຳ ແລະ ປ່າໄມ້ແຫ່ງຊາດໃນການປັບປຸງໂຄງການລິເລີ່ມການສື່ສານມວນຊົນ. ອົງການໄດ້ມີການປະສານງານ ແລະ ພົວພັນກັບມະຫາວິທະຍາໄລແຫ່ງຊາດ ໂດຍສະເພາະ ແມ່ນຄະນະນິຕິສາດ ແລະ ລັດຖະສາດ ເພື່ອພັດທະນາໂຄງການ ອາສາສະໝັກ ນັກກົດໝາຍຂຶ້ນ ເພື່ອສະໜັບສະໜູນ ການເຮັດວຽກກ່ຽວກັບທີ່ດິນ ແລະ ຊັບພະຍາກອນທຳມະຊາດ. ຈາກນັ້ນ ອົງການຈຶ່ງໄດ້ເລີ່ມພັດທະນາ: "ໂຄງການເຄືອຂ່າຍຂໍ້ມູນທີ່ດິນ ແລະ ຊັບພະຍາກອນທຳມະຊາດ".



## ຈຸດປະສົງຂອງໂຄງການ

ເພື່ອສົ່ງເສີມພາກສ່ວນທີ່ກ່ຽວຂ້ອງໃຫ້ມີຄວາມຮູ້, ຄວາມສາມາດ ແລະ ການມີສ່ວນຮ່ວມໃນການປຶກສາຫາລືກ່ຽວກັບຂໍ້ມູນຂ່າວສານທີ່ດິນ ເພື່ອໃຫ້ປະຊາຊົນໃນທ້ອງຖິ່ນສາມາດເຂົ້າໃຈໄດ້ກ່ຽວກັບສິດໃນການນຳໃຊ້ ແລະ ຄຸ້ມຄອງທີ່ດິນ.

### ອົງປະກອບຂອງໂຄງການ:






## ອົງປະກອບທີ 1

### ການສ້າງເຄືອຂ່າຍຄວາມຮູ້

ສະໜັບສະໜູນສົ່ງເສີມທາງດ້ານຄວາມຮູ້, ການເຂົ້າເຖິງຂໍ້ມູນຂ່າວສານ, ການປຶກສາຫາລື ແລະ ການຮ່ວມມື ຂອງບັນດາພາກສ່ວນທີ່ກ່ຽວຂ້ອງຫຼັກ ໃນປະເດັນທີ່ກ່ຽວຂ້ອງ ກັບການຄຸ້ມຄອງທີ່ດິນ ແລະ ຊັບພະຍາກອນທຳມະຊາດ (ຊາວບ້ານ, ຊຸມຊົນ, ອຳນາດການປົກຄອງທ້ອງຖິ່ນ, ຜູ້ກຳນົດນະໂຍບາຍ ລະດັບສູນກາງ ແລະ ຜູ້ເຮັດວຽກພາກປະຊາສັງຄົມ) ເພື່ອເຮັດໃຫ້ເກີດຂະບວນການຕັດສິນໃຈທີ່ໂປ່ງໃສ ແລະ ມີຂໍ້ມູນພຽງພໍໃນລະດັບທ້ອງຖິ່ນ. ສູນຂໍ້ມູນຂ່າວສານຈະເປັນເວທີທາງທີ່ທຸກພາກສ່ວນສາມາດເຂົ້າມານຳໃຊ້ ແລະ ແລກປ່ຽນຂໍ້ມູນຂ່າວສານ ກ່ຽວກັບສິດ ແລະ ໜ້າທີ່ທາງດ້ານທີ່ດິນຮ່ວມກັນ. ໃນລະດັບແຂວງສູນຂໍ້ມູນຂ່າວສານຂັ້ນແຂວງຈະເປັນເວທີສົນທະນາ ແລະ ເຄືອຂ່າຍຕ່າງໆ ຈະຖືກຈັດຕັ້ງຂຶ້ນເພື່ອປັບປຸງການພົວພັນ ລະຫວ່າງພາກສ່ວນທີ່ກ່ຽວຂ້ອງຕ່າງໆ ແລະ ຈະທຳໜ້າທີ່ເປັນສູນກາງ ຂອງການເຊື່ອມຕໍ່. ໃນລະດັບທ້ອງຖິ່ນ ໂຄງການ ຈະສ້າງເສີມຂໍ້ມູນຂ່າວສານ, ສະຖາບັນທ້ອງຖິ່ນຕ່າງໆ ພ້ອມທັງທົດລອງຈັດຕັ້ງປະຕິບັດຮູບແບບວິທີການແບບໃໝ່ ເພື່ອກໍ່ສ້າງສະຖາບັນທ້ອງຖິ່ນ ໃນການສະໜັບສະໜູນການປັບປຸງລະບົບ ການບໍລິຫານຄຸ້ມຄອງຊັບພະຍາກອນທຳມະຊາດ.



# Project Objective

To improve stakeholders (government, civil society, private sector, local communities particularly women and ethnic groups) capacity, knowledge, and participation in policy dialogue on land-related issues so that rural communities can exercise their rights to manage the land they use in a sustainable and equitable manner.



Implementing Partners:

Ministry of Agriculture and Forestry, Ministry of Justice, Lao Bar Association, National University of Laos, Lao Women's Union, Ministry of Information and Culture, Non Profit Associations, National Assembly, Faculty of Law, various INGOs, the Land Issues Working Group and others.

# Component 3

## Capacity Development

The focus is on building capacity of individuals and organizations to better manage and resolve conflicts on land and natural resources management. Capacity building will including NGO, Lao government staff, local officials, lawyers and law students to be able to address land issues and to solve conflicts.



For Further Information Contact:

Ms. Khamla Phoutharath, Project Manager

E-mail: khamla@rightslinklao.org

Tel: 021-312 519, Fax: 021-350 740

Mobile: 020 - 242 6203

www.rightslinklao.org

# Project

## Rights - Land, Information Network and Knowledge



## RIGHTS-LINK Lao Project

Project Holder:

Village Focus International (VFI)

Primary Government Partner

National Land Management Authority (NLMA)

Principal Donor:

Swiss Agency for Development and Cooperation ( SDC )

# Project Background

VFI has been working on land-related issues since 2001, starting with basic land-use planning with villages in Salavan Province. After a series of land-related conflicts between local people and investors, VFI recognized the need for better communications on land related issues as well as linking problems in the field to the policy level. VFI's first step into the national policy arena was the 'Village Rights and Responsibilities to Manage Land and Forest Resources' Handbook made with the Department of Forestry. Since then, VFI worked with the NLMA on a conflict resolution course and corresponding set of materials, as well as establishing linkages with the Faculty of Law to develop para-legal support to land-related issues. In addition, VFI organized a national workshop with NAFRI and NAFES on improving rural communication. It has established linkages to legal aid groups and the Faculty of Law as well as engaged with a number of INGOs and NPAs (Non-Profit Associations), and private companies. Based on these initiatives, as well as recognition of the importance of land issues to national development, VFI developed the Rights-LINK project.



# Project Components




## Component 1:

### Knowledge Networking

The Rights-LINK project will work to link different actors, at different levels, working in land and natural resources, with particular attention to legal rights. The project will not try to coordinate all activities but will link actors to different knowledge and processes so they can make their own choices and decisions regarding land and natural resource management. A key feature will be to work equally with government and non-governmental partners.

At the national level, the LINK Resource Centre will be a neutral platform, where all actors can come together to access information and to share information on land rights and responsibilities. At the provincial and regional levels, platforms and networks will be established to improve linkages between different actors and to act as linkage nodes. In the south, for instance, there is a good opportunity to create a network of INGOs, local NPAs and government projects working on land and legal issues. At the local level, the project will build upon informal, customary institutions as well as test out new approaches to building local institutions to support improved governance of natural resources.



## Component 2:

### Local land use and Management

This Project Component will initially focus in three districts (Lao Ngam, Taoi and Samoui) of Salavan Province to test, develop and document community legal aid approaches related to land and natural resource management. New approaches to land and natural resource management will be elaborated in a participatory manner at the village level, to help farmers and communities secure land and enhance their livelihoods. This second component will provide linkages to the local level and ensure national level processes and understanding is linked to field level reality. The project will support activities both at the level of policy and implementation.

